# ກ່ຳພ້າກັບສ່ຽວ

## ພາກໜຶ່ງ



ສະບາຍດີຜູ້ອ່ານ

ມາອ່ານປື້ມຫົວນີ້ເບິ່ງດູ. ມັນແມ່ນເລື່ອງ ປະກອບຮູບແຕ້ມ ອ່ານເຂົ້າໃຈງ່າຍ ທັງມ່ວນ ທັງມີຄະຕິ , ເດັກນ້ອຍກໍອ່ານ ຜູ້ໃຫຍ່ກໍອ່ານ ເພາະພິມອອກສຳລັບທຸກຄົນ.

ກົມສາມັນສຶກສາ ກັບອົງການອຸຍນີເຊັບ ຮ່ວມກັນຈັດພິມ ປື້ມຫົວນີ້ຂຶ້ນມາ ເພື່ອ ຮັບໃຊ້ຜູ້ອ່ານທັງຫຼາຍ. ພວກເຮົາດີໃຈທີ່ສຸດ ທີ່ມີໂອກາດ ສະເໜີປື້ມຫົວນີ້ ແລະ ຫົວອື່ນໆ

ຈົ່ງຕິດຕາມອ່ານຕໍ່ໄປເລື້ອຍໆ ເນີ.

ນິທານ ທ້າວກ່ຳພ້າ ແລະ ຜີນ້ອຍ

ພາກໜຶ່ງ

---

# ກ່ຳພ້າກັບສ່ຽວ

ຂຽນເລື່ອງໂດຍ: ດວງເດືອນ ບຸນຍາວົງ
ແຕ້ມຮູບປະກອບໂດຍ: ສ. ສະໄຫວ

---

ຈັດພິມໂດຍ ກົມສາມັນສຶກສາ ກະຊວງສຶກສາ ແລະ ກິລາ.
ໂດຍ ການຊ່ວຍເຫຼືອຈາກອົງການ ອຸຍນີເຊັບ

1990



ປາງກ່ອນກໍ້ ມີທ້າວນ້ອຍຄົນໜຶ່ງ ພໍ່ແມ່ຕາຍປະ , ໄທບ້ານໄທເມືອງ ມັກເອີ້ນທ້າວວ່າ "ບັກກ່ຳພ້າ " .

ກ່ຳພ້າຢູ່ເຮືອນຕູບ ບໍ່ມີຝາ, ຍາມໜາວຈຶ່ງນອນຜິງໄຟ .

ແຕ່ລະມື້ ກ່ຳພ້າ ທ່ຽວຂໍທານ, ບາງມື້ໄດ້ເຂົ້າມາ ແຕ່ບ້ານເໜືອ ໄດ້ເກືອມາແຕ່ບ້ານໃຕ້ , ຜູ້ໃຈດີກໍບາຍ ຊີ້ນແຫ້ງປາຕາຍໃສ່ມືໃຫ້.





ຜູ້ໃຈຮ້າຍ ກໍ່ດ່າໃສ່ ໄລ່ໜີ ,   ຜູ້ຊັ້ດັ໊ເອົາ ມິ່ນໝໍ້ ທາ ໜ້າໃຫ້ດຳ ແລ້ວຫົວຂວັນ .

ຫຼາຍຝົນ ຫຼາຍໜາວ ຜ່ານໄປ ກ່ຳພ້າ ກໍ່ໃຫຍ່ ສຊຸບ ບ່າວ. ພໍ່ບ້ານປຶກສາກັບລູກບ້ານວ່າ ຢາກໃຫ້ທ້າວຮູ້ ເຮັດໄຮ່ ໃສ່ນາ ຫາລ້ຽງຕົນເອງ.





ພໍ່ບ້ານ ບອກກ່ຳພ້າ ໄປຖາງປ່າເລົ່າ ຊ່າວນາ ຢູ່ ແຄມດົງໃຫຍ່ ບ່ອນບໍ່ມີຜູ້ໃດ ຈັບຈອງ ເພາະຊ່າລືກັນ ວ່າ ມີຜີຮ້າຍ .

ກ່ຳພ້າໄດ້ຈົກ ສຽມ ແລະ ພ້າຂໍຂີ້ຫຼົ້ມທີ່ໄທບ້ານໃຫ້ທານ ແລ້ວກໍ່ອອກໄປຍັງແຄມດົງໃຫຍ່ ບ່ອນພໍ່ບ້ານຊີ້ບອກ .

ພໍ່ບ້ານ ແລະ ຄົນອື່ນໆດີໃຈ. ແຕ່ນີ້ຕໍ່ໄປ ທ້າວກ່ຳພ້າ ຈະບໍ່ມາ ເລາະທ່ຽວ ຂໍທານອີກ .





ເມື່ອມາຮອດ ປາຍທົ່ງແຄມປ່າ ກ່ຳພ້າຕັດໄມ້ໄຜ່
ມາປຸກເປັນຖຽງນ້ອຍ ພໍຊື້ນແດດ ຊື້ນຝົ່ນ .

ປ່າດົງເຂດນີ້ ມີຜີໝູ່ໜຶ່ງເຝົ້າຫວງຢູ່, ເມື່ອເຫັນຄົນມາປຸກຕູບນ້ອຍໃສ່ ພວກຜີກໍ່ໂມໂຫໃຈຮ້າຍໃຫ້ຜູ້ມາລ່ວງເຂດ.





ກ່ຳພ້າ ໂຊກດີ ທີ່ເທວະດາຜູ້ຮັກສາປ່າ ທັບມາຫ້າມ ພວກມັນໄວ້. ເທວະດາບອກວ່າ ກ່ຳພ້າຈະບໍ່ ຣາວີ ທຳຮ້າຍພວກມັນ, ກົງກັນຂ້າມ ທ້າວຈະມາ ສ້າງສາປູ່ກເຂົ້າ ຫາປາສູ່ພວກມັນກິນ, ໃຫ້ພວກຜີ ຊ່ວຍທ້າວເຮັດວຽກ .

ຮູ້ແນວນັ້ນ ພວກຜີ ເຊິ່ງມີຜີຍ່າງ່າມເປັນນາຍ ກໍ່ພາກັນຊ່ວຍຖາງປ່າ ຊ່າວນາ ແລະ ຫາໄມ້ ໃຫຍ່ມາປຸກເຮືອນ ໃຫ້ທ້າວ ກ່ຳພ້າ





ກ່ຳພ້າ ດີໃຈຫຼາຍ ທີ່ນາຂອງຕົນ ແລ້ວໄວ ຈຶ່ງຕ່າວ ຄືນມາໃນບ້ານ ຂໍແນວເຂົ້າປູ່ກ .

ຫຼາຍຄົນບໍ່ເຊື່ອວ່າ ທ້າວກ່ຳພ້າຊ່າວບາແລ້ວ ຈຶ່ງບໍ່ຢາກໃຫ້ແນວເຂົ້າປູ່ກ, ແຕ່ຂືນບໍ່ໄດ້ ຈຶ່ງເອົາໃຫ້ຜູ້ລະກຳ.





ກ່ຳພ້າເອົາເຂົ້າປູກທີ່ໄດ້ມາ ແຊ່ນ້ຳໃສ່ກະບັ້ງໄມ້ໄຜ່ ຈົນອອກໜໍ່ ແລ້ວເອົາອອກມາຫວ່ານໃສ່ຕາກ້າ .

ກ້າຂຶ້ນຂຽວງາມແລ້ວ ກ່ຳພ້າຫຼິກມາດຳ, ພວກຜີ
ອອກມາເຮັດຊ່ວຍພຶບໆ ຄາວດຽວການດຳນາກໍແລ້ວ,
ທົ່ງນາ ກ້ວາງຕໍ່ກ້ວາງ ກໍ່ມີສີຂຽວອ່ອນເຕັມໄປໝົດ.





ວັນໜຶ່ງ ທ້າວ ກ່ຳພ້າເຂົ້າໄປໃນບ້ານ ແລະ ເລົ່າວ່າ ເຂົ້ານາຂອງຕົນພວມຊຽວງາມ. ປະກົດວ່າ ບໍ່ມີໃຜເຊື່ອ, ບາງຄົນພາໂລເອົາເຂົ້າແຫ້ງ ແລະ ຊີ້ແຂ້ວໃຫ້ ທັງບອກວ່າ ໃຫ້ເອົາອັນນີ້ ໜຶ້ງກິນແທນເຂົ້າ .

ກໍ່ພ້າ ເອົາເຂົ້າແຫ້ງ ແລະ ຊຶ້ແຂ້ວມາໜຶ້ງຕາມເພິ່ນບອກ. ໜ້າອັດສະຈັນແທ້ໆ ພໍແຕ່ອາຍກຸ້ມຂຶ້ນ ກໍ່ມີກິ່ນຫອມເຫີຍຮ່ວນອອກມາ .





ພວກຜີ ຫອມກິ່ນເຂົ້າສຸກ ຈິ່ງແຫ່ກັນມາຂໍກິນ .
ກ່ຳພ້າ ປັ້ນຢາຍໃສ່ມືໃຫ້ພວກມັນ.

ຫວ່າງຈາກບົວລະບັດເຂົ້າໃນນາ ກໍ່ພ້າສານໃຊ
ເພື່ອໃສ່ເອົາປາໃນຫ້ວຍ, ແຕ່ເມື່ອໄປຢາມໃຊ ເຫັນວ່າ
ໃຊເປົ່າ, ມີແຕ່ຮອຍຕີນແປກປະຫຼາດຍໍ່າຢູ່ແຄມຫ້ວຍ.





ກ່ຳພ້າເລົ່າເລື່ອງສູ່ຜີຍ່າງ່າມຟັ່ງ. ຜີຍ່າງ່າມຫຼົກຂົນ

ໃຫ້ເສັ້ນໜຶ່ງ ທັງບອກທ້າວວ່າ :

" ເອົາໄປເຮັດບ້ວງແຮ້ວ ໃສ່ທາງລົງຕ້ອນ ".

ກ່ຳພ້າເຮັດຕາມຄວາມຜີຍ່າງ່າມບອກ. ດັ່ງນັ້ນ ມື້ຕໍ່ມາ ເມື່ອຜີນ້ອຍໂຕໜຶ່ງ ທີ່ເຄີຍລັກກິນປາຢູ່ໃຊໄດ້ກັບມາອີກ ມັນຈຶ່ງຖືກບ້ວງຍັກຂາ, ມັນດີ້ນດັ່ນໄປມາ ແຕ່ເຊືອກບ້ວງກໍ່ບໍ່ຂາດ .

ເມື່ອກ່ຳພ້າມາພໍ້, ຜີນ້ອຍອ້ອນວອນຂໍຊີວິດ ທັງສັນຍາວ່າຈະຊ່ວຍກ່ຳພ້າທຸກຢ່າງ . ກ່ຳພ້າຮັບເອົາຜີນ້ອຍ ເປັນນ້ອງຮັກ ແລ້ວປ່ອຍມັນໄປ .





ແຕ່ລະມື້ ມີສັດຕ່າງໆ ອອກຈາກດົງລົງມາກິນນ້ຳ ຫຼື ມາກິນເຂົ້າອ່ອນໃນນາ ກິນປາຄາຢູ່ໃຊ. ບາງໂຕກໍ່ມາ ຖືກບ້ວງ ແຮ້ວຂອງກ່ຳພ້າ. ກ່ຳພ້າປ່ອຍສັດທຸກໆໂຕໄປ ພາຍຫຼັງທີ່ໄດ້ຜູກສ່ຽວ ແລະ ສັນຍາກັນວ່າ ຈະຊ່ວຍ ເຫຼືອກັນ ເວລາມີອັນຕະລາຍ.

ສະນັ້ນ ກ່ຳພ້າຈຶ່ງມີສ່ຽວເປັນສັດຕ່າງໆດັ່ງນີ້: ເຫຼັ້ນ, ນາກ, ນົກອິນຊີ ເສືອ ແລະ ອື່ນໆ.

ຕົກ ຮອດເດືອນ ສິບເອັດ ເຂົ້າໃນນາຖອກຮວງ ສົ່ງກິ່ນຫອມກະຈາຍໄປທົ່ວປ່າດົງ. ຊ້າງໝູ່ໜຶ່ງເຊິ່ງມີຊ້າງພາຍງາຍາວສາມວາ ເປັນຫົວໜ້າ ພາກັນນຳ ກິ່ນຫອມມາຮອດທົ່ງນາຂອງກ່ຳພ້າ. ພະຍາຊ້າງຫົວໜ້າໝູ່ເລີຍຖືກບ້ວງຍັກຂາ.

ກ່ຳພ້າມາພໍ້, ຊ້າງຂໍຊີວິດແລະມອບງາ ກິ່ງໜຶ່ງໃຫ້ທ້າວ ພ້ອມທັງບອກວ່າ: " ໃຫ້ລູກເອົາງານີ້ ໝູນຫົວຕາງໝອນ ຄອນໆຫຼັບໂຊກຊິມາໂຮມທ້າວ ".





ກໍ່ພ້າເອົາງາມາໝູນຫົວນອນ ຕາມຄວາມພະຍາຊ້າງບອກ. ຕອນກາງຄືນ ເມື່ອທ້າວນອນແຈບຈີມ ນາງງາລູກສາວພະຍາຊ້າງ ກໍ່ອອກຈາກງາ.

ນາງງາດູຕົນກໍ່າພ້າ ທີ່ນອນໝາວ, ເຄື່ອງນຸ່ງ ກໍ່ ຂາດສ້ອຍ. ນາງໃຊ້ແຫວນທໍາມະລົງ ທີ່ ພະຍາຊ້າງ ມອບໃຫ້ນັ້ນເບລະມິດ ເຄື່ອງນຸ່ງແພຖືທີ່ຈີບງາມ ເຄື່ອງ ໃຊ້ເອ້ຍ້ອງໃນເຮືອນ,ແລ້ວນາງກໍ່ແຕ່ງພາເຂົ້າທິບໄວ້ໃຫ້ ທ້າວ, ຈາກນັ້ນ ຈຶ່ງກັບຄືນເຂົ້າຢູ່ໃນງາຕາມເດີມ.





ຮຸ່ງເຊົ້າມາ ກ່ຳພ້າແປກຕ່າງໃຈຫຼາຍ, ຫຼຽວເບິ່ງອັນໃດກໍ່ງາມເຫຼື້ອມໃສໄປໝົດ. ເຄື່ອງນຸ່ງຂອງທ້າວ ເອງກໍ່ປານ ຂອງ ລູກຫຼານພະຍາ, ຫຼຽວໄປຫຼຽວມາຊ້ຳເຫັນພາເຂົ້າອາຫານ ຄາວ ຫວານ ອອກອາຍຫອມຢູ່. ກ່ຳພ້າກິນອາຫານຢ່າງແຊບນົວ.

ທ້າວເອົາແຈກຢາຍໃຫ້ພວກຜີກິນອີ່ມທຸກຕົວ .
ເຫດການແບບເກົ່າເກີດຂຶ້ນທຸກໆຄືນ ,  ກ່ຳພ້າ ຢາກຮູ້
ວ່າ  ໃຜເປັ່ນຄົນແຕ່ງຢູ່ຄົວກິນໃຫ້ທ້າວແນວນີ້ .





ແລງໜຶ່ງ ທ້າວເຂົ້ານອນແຕ່ຫົວຄ່ຳ, ເຮັດຄືວ່າ ນອນຫຼັບ. ໃນຕອນເດິກ ນາງງາ ອອກມາຈັດແຈ່ງ ປັດກວາດເຮືອນຊານ ແຕ່ງເຂົ້າປາອາຫານ. ທ້າວກ່ຳ ພ້າເຫັນຈຶ່ງຮູ້ຈັກເລື່ອງ: " ໂທ! ແມ່ນນາງພ້ຳອອກ ມາແຕ່ງານີ້ເອງ ", ແລ້ວທ້າວກ່ຳຫຼຸບໄປເອົາງາໂຍນໃສ່ ກອງໄຟ. ນາງງາຮ້ອງໄຫ້ຮ່ຳໄຮ, ກ່ຳພ້າອິ່ນອອຍ ແລະ ຂໍມັກຮັກ ເອົາກັນເປັນຜົວເມຍ.

ກໍ່າພ້າ ແລະ ບາງງາ ດໍາລົງຊີວິດຢູ່ຮ່ວມກັນທີ່ເຮືອນແຄມດົງ ຊ່ວຍກັນປູກຕົ້ນໄມ້ກິນໝາກ, ປູກເຂົ້າໃສ່ນາ, ມີເຂົ້າປາອາຫານກິນອຸດົມສົມບູນຕະຫຼອດປີ .



( ຍັງມີຕໍ່ພາກສອງ )

ປີສາກົນແຫ່ງການລົບລ້າງຄວາມບໍ່ຮູ້ໜັງສື
1990

ພິມຄັ້ງທີ 1 ຈຳນວນ 10.000 ຫົວ
ພິມທີ່ວິສາຫະກິດ ການພິມຈຳໜ່າຍສຶກສາ